ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ **0899**/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 12 MAR 2026

ໜັງສືລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອຳນວຍການ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ,
ພ້ອມດ້ວຍທ່ານຜູ້ຖືຮຸ້ນ ຜ-ຟຟລ ທີ່ເຄົາລົບ.

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງການຕົກລົງເຫັນດີຂອງຄະນະສະພາບໍລິຫານ.

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.
- ອີງຕາມ ໃບລາຍງານ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ສະບັບເລກທີ 0386/ຜ-ຟຟລ, ລົງວັນທີ 27/01/2026.
- ອີງຕາມ ໃບລາຍງານ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ສະບັບເລກທີ 0747/ຜ-ຟຟລ, ລົງວັນທີ 24/02/2026.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງມະຕິຕົກລົງມູນວຽນເປັນເອກະພາບຂອງສະພາບໍລິຫານ ສະບັບເລກທີ 004/ຜ-ຟຟລ,ສພບ, ມີລາຍລະອຽດລຸ່ມນີ້:

1. ເຫັນດີ ຍົກເລີກການຈັດກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 01/2026 ທີ່ຈະຈັດຂຶ້ນໃນວັນສຸກ 20 ມີນາ 2026, ທີ່ຫ້ອງປະຊຸມຊັ້ນ 01 ສຳນັກງານໃຫຍ່ລັດວິສະຫະກິດໄຟຟ້າລາວ. ລວມທັງຍົກເລີກສິດຜູ້ຖືຮຸ້ນ ທີ່ມີລາຍຊື່ໃນປຶ້ມທະບຽນຜູ້ຖືຮຸ້ນ ທີ່ໄດ້ກຳນົດວັນປິດປຶ້ມ ວັນທີ 10 ກຸມພາ 2026 ໃນການເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 01/2026.
2. ແຈ້ງວາລະພິຈາລະນາ ການໂອນຮຸ້ນໃນສັດສ່ວນ 60% ທີ່ ຜ-ຟຟລ ຖືຄອງໃນບໍລິສັດ ເທີນ-ຫີນບູນ ພາວເວີ ຈຳກັດ ໄປຮັບຮອງໃນກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2025 ຫຼື ຄັ້ງຕໍ່ໄປຕາມເວລາອັນຄວນ. ເນື່ອງຈາກ ຜ-ຟຟລ ຍັງບໍ່ມີຄວາມພ້ອມໃນການດຳເນີນກອງປະຊຸມ ໂດຍສະເພາະແມ່ນການກະກຽມເນື້ອໃນທີ່ສຳຄັນ ຕ່າງໆຍັງບໍ່ທັນສຳເລັດຄົບຖ້ວນຕາມນິຕິກຳ ແລະ ລະບຽບການທີ່ກຳນົດໄວ້.

ດັ່ງນັ້ນ, ຈຶ່ງຂໍຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ຮຽນມາດ້ວຍຄວາມນັບຖື,
ປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸລິວັດ ສຸວັນນະຈຸມຄຳ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ຕູ້ ປ. ນ. 2392, ໂທລະສັບ: (856-21) 316 142, ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la